ມາດຕາ 2. ນິຍາມຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້ :

- **ການໄກ່ເກ່ຍ** ແມ່ນການສຶກສາອົບຮົມ ເຮັດໃຫ້ຄູ່ຂັດແຍ່ງມີຄວາມຮູ້ສຶກຕື່ນຕົວ ແລະຍິນຍອມຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນໃຫ້ຕົກແຕກໄປໂດຍສັນຕິວິທີ.

- **ຂໍ້ຂັດແຍ່ງ** ແມ່ນຄວາມບໍ່ຖືກຕ້ອງປອງດອງກັນ, ບໍ່ລ່ອງລອຍກັນ ທີ່ເກີດຂຶ້ນລະຫວ່າງສອງຄົນ ຫຼືຫຼາຍຄົນ, ບຸກຄົນຕໍ່ບຸກຄົນ, ບຸກຄົນຕໍ່ການຈັດຕັ້ງ, ຄອບຄົວຕໍ່ຄອບຄົວ ກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ, ແຮງງານ ແລະອື່ນໆ ຊຶ່ງຄູ່ກໍລະນີບໍ່ສາມາດຕົກລົງແກ້ໄຂກັນໄດ້, ແຕ່ຍັງບໍ່ທັນຖືກດຳເນີນຄະດີຕາມຂະບວນການຍຸຕິທຳ.

- **ຂໍ້ຂັດແຍ່ງຂັ້ນບ້ານ** ແມ່ນຄວາມບໍ່ຖືກຕ້ອງປອງດອງກັນ, ບໍ່ລ່ອງລອຍກັນ ທີ່ເກີດຂຶ້ນພາຍໃນຄອບຄົວ ຫຼືພາຍໃນບ້ານ.

- **ຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ** ແມ່ນຄະນະກຳມະການທີ່ໄດ້ຖືກແຕ່ງຕັ້ງໃຫ້ຮັບຜິດຊອບແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະສັງກັດຢູ່ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ກະຊວງຍຸຕິທຳ ຫຼືຢູ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງພະແນກຍຸຕິທຳນະຄອນຫຼວງ ແລະແຂວງ.

- **ຂໍ້ຂັດແຍ່ງທາງດ້ານເສດຖະກິດ** ແມ່ນຂໍ້ຂັດແຍ່ງໃນການດຳເນີນທຸລະກິດ, ການຄ້າ, ການລົງທຶນ ແລະອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

- **ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ** ແມ່ນຫົວໜ່ວຍການຈັດຕັ້ງຍຸຕິທຳຮາກຖານ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໂດຍປະຊາຊົນພາຍໃນບ້ານ ແລະໄດ້ຮັບການຮັບຮອງຈາກເຈົ້າເມືອງ.

- **ໜ່ວຍໄກ່ເກ່ຍຄະດີເດັກ** ແມ່ນໜ່ວຍດຽວກັນກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້.

- **ການກະທຳຜິດ** ແມ່ນທຸກການກະທຳ ຫຼືການເມີນເສີຍຂອງບຸກຄົນ, ນິຕິບຸກຄົນ ທີ່ເປັນການລະເມີດກົດໝາຍຢ່າງຮ້າຍແຮງຊຶ່ງແຕະຕ້ອງເຖິງຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕໍ່ຊີວິດ, ສຸຂະພາບ, ກຽດສັກສີ, ກຳມະສິດຂອງບຸກຄົນ, ຂອງລັດ, ຂອງລວມໝູ່ ແລະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍອາຍາ ແລະກົດໝາຍອື່ນໆທີ່ກ່ຽວຂ້ອງ.

- **ການກະທຳຜິດທີ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານມີສິດແກ້ໄຂ** ແມ່ນບັນດາການກະທຳຜິດທີ່ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍອາຍາ ຊຶ່ງຜູ້ຖືກເສຍຫາຍບໍ່ໄດ້ຮ້ອງຟ້ອງຕໍ່ສານແຕ່ສະເໜີໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເປັນຜູ້ພິຈາລະນາແກ້ໄຂດ້ວຍການປະນີປະນອມ.

- **ການກະທຳຜິດຂອງເດັກ** ແມ່ນການກະທຳຜິດຕາມທີ່ລະບຸໄວ້ໃນຂີດໜ້າທີ 8 ຂ້າງເທິງນີ້ຂອງບຸກຄົນທີ່ມີ ອາຍຸແຕ່ ສິບຫ້າປີ ຂຶ້ນໄປແຕ່ບໍ່ເຖິງ ສິບແປດປີ.